**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0153 /ອຄ
ນະຄອນຫລວງວຽງຈັນ, ວັນທີ 31 ມັງກອນ 2025

# ຄຳແນະນຳ
# ວ່າດ້ວຍການຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ
# ພາຍໃຕ້ສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 083/ກຊປ, ລົງວັນທີ 23 ມັງກອນ 2025.

ເພື່ອຈັດຕັ້ງປະຕິບັດວຽກງານຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ ໃຫ້ສອດຄ່ອງກັບສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ ລະຫວ່າງ ສປປ ລາວ ແລະ ອົງການສິດທິບັດເອີຣົບ ສະບັບລົງວັນທີ 13 ພຶດສະພາ 2024 ກ່ຽວກັບການຮັບຮອງສິດທິບັດເອີຣົບ ທີ່ໄດ້ຮັບອະນຸມັດຈາກສຳນັກງານສິດທິບັດເອີຣົບ, ແນໃສ່ຊຸກຍູ້, ສົ່ງເສີມການຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ ແລະ ປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:

### I. ການຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ ພາຍໃຕ້ສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ

ການຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ ພາຍໃຕ້ສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ ແມ່ນ ການຮັບຮອງສິດທິບັດ ທີ່ໄດ້ຮັບການອະນຸມັດຈາກສຳນັກງານສິດທິບັດເອີຣົບ ແລະ ຮັບຮອງໃນນາມທາງການ ຢູ່ ສປປ ລາວ ໂດຍກົມຊັບສິນທາງປັນຍາ.

### II. ຂັ້ນຕອນການຮັບຮອງສິດທິບັດເອີຣົບ

#### 1. ການຮັບຮອງສິດທິບັດເອີຣົບ

ຄຳຮ້ອງ ແລະ ສິດທິບັດເອີຣົບ ທີ່ຖືກຮັບຮອງ ຢູ່ ສປປ ລາວ ມີຜົນສັກສິດ ແລະ ໄດ້ຮັບການປົກປ້ອງ ເຊັ່ນດຽວກັນກັບຄຳຮ້ອງ ແລະ ສິດທິບັດພາຍໃນປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ ແລະ ລະບຽບການກ່ຽວຂ້ອງ.

#### 2. ການສະເໜີຂໍຮັບຮອງສິດທິບັດ

ການສະເໜີຂໍຮັບຮອງສິດທິບັດ ໃຫ້ປະຕິບັດ ດັ່ງນີ້:

1) ຄຳຮ້ອງ ແລະ ສິດທິບັດເອີຣົບ ສາມາດສະເໜີຂໍຮັບຮອງສິດທິບັດ ຢູ່ ສປປ ລາວ ພາຍຫຼັງທີ່ຍື່ນຄຳຮ້ອງຕໍ່ສຳນັກງານສິດທິບັດເອີຣົບໄດ້ກ່ອນ ຫຼື ຫຼັງວັນທີ ທີ່ສັນຍາ ວ່າດ້ວຍການຮັບຮອງສິດທິບັດເອີຣົບ ມີຜົນບັງຄັບໃຊ້;

2) ພາຍຫຼັງທີ່ໄດ້ຮັບແຈ້ງການ ກ່ຽວກັບການສະເໜີຂໍຮັບຮອງສິດທິບັດເອີຣົບ ຈາກສຳນັກງານສິດທິບັດເອີຣົບແລ້ວ ກົມຊັບສິນທາງປັນຍາ ຕ້ອງພິມເຜີຍແຜ່ການສະເໜີຂໍຮັບຮອງສິດທິບັດເອີຣົບທັນທີ ໂດຍສອດຄ່ອງຕາມເງື່ອນໄຂການພິມເຜີຍແຜ່ຄຳຮ້ອງທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ວ່າດ້ວຍສິດທິບັດ ແລະ ອະນຸສິດທິບັດ;

3) ຜູ້ຮ້ອງຂໍຮັບຮອງສິດທິບັດເອີຣົບ ສາມາດຖອນຄຳຮ້ອງໄດ້ທຸກເວລາ, ກົມຊັບສິນທາງປັນຍາ ຈະຖືວ່າຄຳຮ້ອງຖືກຖອນ ໃນກໍລະນີ ໄດ້ຮັບແຈ້ງວ່າຜູ້ຮ້ອງຂໍບໍ່ໄດ້ຈ່າຍຄ່າທຳນຽມຕ່າງໆຕາມກຳນົດເວລາ ຫຼື ກໍລະນີ ທີ່ຄຳຮ້ອງຂໍຖືກແຈ້ງປະຕິເສດຂັ້ນສຸດທ້າຍ, ຖອນ ຫຼື ຖືກສະຫຼະສິດ ຈາກສຳນັກງານສິດທິບັດເອີຣົບ, ກົມຊັບສິນທາງປັນຍາ ຕ້ອງພິມເຜີຍແຜ່ສະຖານະດັ່ງກ່າວ.

### 3. ຜົນບັງຄັບໃຊ້ຂອງຄຳຮ້ອງຂໍຮັບສິດທິບັດເອີຣົບ

ຄຳຮ້ອງຂໍຮັບສິດທິບັດເອີຣົບ ຈະມີຜົນບັງຄັບໃຊ້ ດັ່ງນີ້:

1) ຄຳຮ້ອງຂໍຮັບສິດທິບັດເອີຣົບ ທີ່ໄດ້ຮັບວັນທີຍື່ນຄຳຮ້ອງແລ້ວ ຈະມີຜົນຄືກັນກັບຄຳຮ້ອງຂໍຮັບສິດທິບັດພາຍໃນປະເທດ, ອາດຈະມີການຮ້ອງຂໍວັນບຸລິມະສິດໃນກໍລະນີໃດມາກ່ອນໜ້ານັ້ນ ກໍ່ຈະມີຜົນສັກສິດ ເຊັ່ນດຽວກັນເຖິງວ່າການກວດສອບຈະມີຜົນເປັນຢ່າງໃດກໍ່ຕາມ;

2) ຄຳຮ້ອງຂໍຮັບສິດທິບັດເອີຣົບ ທີ່ໄດ້ຮັບການພິມເຜີຍແຜ່ຢູ່ສຳນັກງານສິດທິບັດເອີຣົບ ຈະຕ້ອງໄດ້ຮັບການປົກປ້ອງຊົ່ວຄາວ ເຊັ່ນດຽວກັນກັບຄຳຮ້ອງຂໍຮັບສິດທິບັດທີ່ໄດ້ຮັບການເຜີຍແຜ່ ຢູ່ ສປປ ລາວ ໂດຍໃຫ້ເລີ່ມຈາກວັນທີທີ່ເຜີຍແຜ່ຂໍ້ຮຽກຮ້ອງສິດສະບັບແປເປັນພາສາລາວ ແລະ ພາສາອັງກິດ ໄດ້ຖືກພິມເຜີຍແຜ່ສູ່ສາທາລະນະ ໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ;

3) ຄຳຮ້ອງຂໍຮັບສິດທິບັດເອີຣົບ ຈະບໍ່ໄດ້ຮັບການປົກປ້ອງຊົ່ວຄາວ ຖ້າຫາກຄຳສະເໜີຂໍຮັບຮອງສິດທິບັດເອີຣົບ ໄດ້ມີຜູ້ຮ້ອງຂໍຖອນ ຫຼື ຖືກສະຫຼະສິດ.

### 4. ຜົນບັງຄັບໃຊ້ຂອງສິດທິບັດເອີຣົບ

ສິດທິບັດເອີຣົບ ມີຜົນບັງຄັບໃຊ້ ດັ່ງນີ້:

1) ສິດທິບັດເອີຣົບທີ່ໄດ້ຖືກຮັບຮອງແລ້ວ ຕ້ອງໄດ້ຮັບສິດເຊັ່ນດຽວກັນກັບສິດທິບັດພາຍໃນປະເທດ ພາຍໃຕ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ນັບຈາກວັນທີ ທີ່ໄດ້ພິມເຜີຍແຜ່ ກ່ຽວກັບການອອກສິດທິບັດຂອງສຳນັກງານສິດທິບັດເອີຣົບ ຊຶ່ງຕ້ອງສອດຄ່ອງຕາມທີ່ໄດ້ກຳນົດໄວ້ບັນດາຂໍ້ຂ້າງລຸ່ມ;

2) ພາຍໃນ ສາມ ເດືອນນັບແຕ່ວັນທີ ທີ່ໄດ້ພິມເຜີຍແຜ່ການອອກສິດທິບັດ ຢູ່ສຳນັກງານສິດທິບັດເອີຣົບ, ເຈົ້າຂອງສິດທິບັດ ຕ້ອງຍື່ນບົດແປຂໍ້ຮຽກຮ້ອງສິດ ເປັນພາສາລາວ ແລະ ພາສາອັງກິດ ພ້ອມທັງຈ່າຍຄ່າບໍລິການ ທີ່ໄດ້ກຳນົດໄວ້ ສຳລັບການພິມເຜີຍແຜ່ໃຫ້ກົມຊັບສິນທາງປັນຍາ;

3) ກໍລະນີ ສິດທິບັດເອີຣົບ ຫາກມີການດັດແກ້ເນື່ອງຈາກ ມີການຄັດຄ້ານ ຫຼື ການຂໍຈຳກັດສິດ, ເຈົ້າຂອງສິດທິບັດຕ້ອງຍື່ນບົດແປຂໍ້ຮຽກຮ້ອງສິດ ເປັນພາສາລາວ ແລະ ພາສາອັງກິດ ທີ່ໄດ້ຮັບການດັດແກ້ຄືນໃໝ່ນັ້ນ ພ້ອມທັງຈ່າຍຄ່າບໍລິການພິມເຜີຍແຜ່ ໃຫ້ກົມຊັບສິນທາງປັນຍາ ພາຍໃນ ສາມ ເດືອນນັບແຕ່ວັນທີທີ່ສຳນັກງານສິດທິບັດເອີຣົບອອກແຈ້ງການ ກ່ຽວກັບການດັດແກ້ດັ່ງກ່າວ;

4) ຂໍ້ຮຽກຮ້ອງສິດ ຫາກມີການອ້າງອີງເຖິງເອກະສານອື່ນ, ສັນຍາລັກທີ່ໄດ້ນຳໃຊ້ໃນຮູບແຕ້ມ, ຮູບແຕ້ມ ແລະ ເອກະສານດັ່ງກ່າວ ຕ້ອງໄດ້ຄັດຕິດມານຳບົດແປຂໍ້ຮຽກຮ້ອງສິດ;

5) ກົມຊັບສິນທາງປັນຍາ ຕ້ອງພິມເຜີຍແຜ່ບົດແປຂໍ້ຮຽກຮ້ອງສິດທັງໝົດໂດຍທັນທີ;

6) ຖ້າວ່າບົດແປຂໍ້ຮຽກຮ້ອງສິດ ຫາກບໍ່ໄດ້ຍື່ນ ຫຼື ຈ່າຍຄ່າບໍລິການ ພິມເຜີຍແຜ່ຕາມເວລາທີ່ກຳນົດໄວ້, ສິດທິບັດເອີຣົບ ທີ່ຖືກຮັບຮອງນັ້ນຈະຖືວ່າເປັນໂມຄະ, ບົດແປດັ່ງກ່າວ ຍັງສາມາດຍື່ນເພື່ອຂໍຕໍ່ເວລາ ຫຼື ອາຍຸ ພາຍໃນ ສາມ ເດືອນ ແຕ່ເຈົ້າຂອງສິດທິບັດ ຕ້ອງຈ່າຍຄ່າປັບໄໝ ສຳລັບຄ່າບໍລິການການພິມເຜີຍແຜ່ ຮ້ອຍເປີເຊັນ;

7) ກໍລະນີ ສິດທິບັດເອີຣົບທີ່ໄດ້ຖືກຮັບຮອງ ແລະ ຄໍາຮ້ອງຂໍຮັບສິດທິບັດເອີຣົບ ຫາກຖືກຍົກເລີກ ຊຶ່ງເປັນຜົນຈາກການຄັດຄ້ານ ຫຼື ຂະບວນການຍົກເລີກ ຫຼື ການຈໍາກັດສິດ ຢູ່ສໍານັກງານສິດທິບັດເອີຣົບ, ກົມຊັບສິນທາງປັນຍາ ຈະຖືວ່າສິດທິບັດເອີຣົບທີ່ຖືກຮັບຮອງ ແລະ ຄໍາຮ້ອງຂໍຮັບສິດທິບັດເອີຣົບ ບໍ່ໄດ້ຮັບສິດ ຫຼື ເປັນໂມຄະ ຈະບໍ່ໄດ້ຮັບສິດເຊັ່ນດຽວກັນກັບສິດທິບັດພາຍໃນປະເທດ ພາຍໃຕ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ບໍ່ໄດ້ຮັບການປົກປ້ອງຊົ່ວຄາວ ຕາມທີ່ໄດ້ກໍານົດໄວ້ໃນຄໍາແນະນໍາສະບັບນີ້.

**5. ເອກະສານຕົ້ນສະບັບຂອງຄໍາຮ້ອງ ແລະ ສິດທິບັດເອີຣົບ**

ຄໍາຮ້ອງ ແລະ ສິດທິບັດເອີຣົບ ທີ່ຍື່ນດໍາເນີນການເປັນພາສາທາງການກັບສໍານັກງານສິດທິບັດເອີຣົບ ຖືວ່າເປັນເອກະສານຕົ້ນສະບັບ ເມື່ອນໍາມາຍື່ນດໍາເນີນການ ຢູ່ ສປປ ລາວ.

ເອກະສານແປຮຽກຮ້ອງສິດ ທີ່ໄດ້ຍື່ນຕາມທີ່ໄດ້ກໍານົດໃນຄໍາແນະນໍາສະບັບນີ້ ຖືວ່າເປັນເອກະສານສະບັບຕົ້ນ, ຍົກເວັ້ນຢູ່ໃນຂັ້ນຕອນການຍົກເລີກຄໍາຮ້ອງ, ຖ້າການແປຮຽກຮ້ອງສິດເປັນພາສາລາວຂອງຄໍາຮ້ອງຂໍຮັບສິດທິບັດເປັນສາເຫດເຮັດໃຫ້ຂອບເຂດການປົກປ້ອງສິດແຄບກວ່າຂອບເຂດການປົກປ້ອງສິດຢູ່ໃນສະບັບຕົ້ນ ໃຫ້ຖືເອົາເອກະສານສະບັບຕົ້ນເປັນຫຼັກ.

ຜູ້ຮ້ອງຂໍຮັບສິດທິບັດເອີຣົບ ຫຼື ເຈົ້າຂອງສິດທິບັດ ທີ່ໄດ້ຮັບການຮັບຮອງ ສາມາດຍື່ນເອກະສານການແປຮຽກຮ້ອງສິດທີ່ດັດແກ້ໃຫ້ຖືກຕ້ອງໄດ້ທຸກເວລາ, ການແປຂໍ້ຮຽກຮ້ອງສິດທີ່ຖືກດັດແກ້ ຢູ່ໃນຄໍາຮ້ອງຂໍຮັບສິດທິບັດເອີຣົບໄດ້ຮັບຮອງ ທີ່ໄດ້ພິມເຜີຍແຜ່ແລ້ວ ຈະຖືວ່າບໍ່ມີຜົນທາງດ້ານກົດໝາຍຈົນກວ່າກົມຊັບສິນທາງປັນຍາ ຈະພິມເຜີຍແຜ່ການດັດແກ້ສູ່ສາທາລະນະ.

ບຸກຄົນໃດໜຶ່ງທີ່ມີຄວາມບໍລິສຸດໃຈ ໃນການນໍາໃຊ້ການປະດິດສ້າງ ຈາກການຄົ້ນຄວ້າຢ່າງຈິງຈັງ ແລະ ການທຸ່ມເທຈາກການກະກຽມຂອງຕົນ ໃຫ້ຖືວ່າການນໍາໃຊ້ການປະດິດສ້າງດັ່ງກ່າວນັ້ນ ບໍ່ໄດ້ເປັນການລະເມີດຄໍາຮ້ອງ ຫຼື ສິດທິບັດ ທີ່ໄດ້ລະບຸໄວ້ຢູ່ໃນການແປຮຽກຮ້ອງສິດສະບັບຕົ້ນ. ພາຍຫຼັງການດັດແກ້ໄດ້ມີຜົນ, ການສືບຕໍ່ນໍາໃຊ້ການປະດິດສ້າງດັ່ງກ່າວ ເຂົ້າໃນການດໍາເນີນທຸລະກິດ ຫຼື ຄວາມຕ້ອງການຕ່າງໆ ບໍ່ຈໍາເປັນຕ້ອງຈ່າຍຄ່າຊົດເຊີຍໃດໆ.

**6. ສິດຂອງວັນທີ ທີ່ຍື່ນກ່ອນໜ້າ**

ຄໍາຮ້ອງ ແລະ ສິດທິບັດເອີຣົບ ທີ່ໄດ້ຈ່າຍຄ່າທໍານຽມ ສໍາລັບການຮັບຮອງ ແລະ ສິດທິບັດເອີຣົບທີ່ໄດ້ຖືກຮັບຮອງສິດທິບັດແລ້ວ ມີຜົນບັງຄັບໃຊ້ທາງດ້ານກົດໝາຍ ຄືກັນກັບຄໍາຮ້ອງຂໍຮັບ ແລະ ສິດທິບັດ ທີ່ໄດ້ຮັບການປົກປ້ອງຢູ່ພາຍໃນປະເທດ.

ຄໍາຮ້ອງຂໍຮັບ ແລະ ສິດທິບັດ ທີ່ໄດ້ຮັບການປົກປ້ອງຢູ່ພາຍໃນປະເທດ ມີຜົນບັງຄັບໃຊ້ທາງດ້ານກົດໝາຍຄືກັນກັບສິດທິບັດເອີຣົບ ທີ່ໄດ້ຖືກຮັບຮອງແລ້ວ.

**7. ການປົກປ້ອງໃນເວລາດຽວກັນ**

ກໍລະນີ ສິດທິບັດເອີຣົບທີ່ໄດ້ຖືກຮັບຮອງ ແລະ ສິດທິບັດທີ່ໄດ້ຮັບການປົກປ້ອງ ຢູ່ພາຍໃນປະເທດ ມີວັນທີຍື່ນຄໍາຮ້ອງວັນດຽວກັນ ຫຼື ໄດ້ມີການຮ້ອງຂໍວັນທີບູລິມະສິດ, ຊຶ່ງວັນທີບູລິມະສິດອັນດຽວກັນນັ້ນ ໄດ້ໃຫ້ການປົກປ້ອງແກ່ບຸກຄົນດຽວກັນ ຫຼື ຜູ້ໄດ້ຮັບການສືບທອດສິດ, ການຄັດຄ້ານສິດທິບັດ ທີ່ໄດ້ຮັບການປົກປ້ອງ ຢູ່ພາຍໃນປະເທດຈະບໍ່ມີຜົນສັກສິດນັບຈາກວັນສິ້ນສຸດລົງຂອງອາຍຸ ຫຼື ໃນການຍື່ນຂໍຄັດຄ້ານສິດທິບັດເອີຣົບ ຫຼື ນັບຈາກວັນທີ ທີ່ມີການຕົກລົງຂັ້ນສຸດທ້າຍ ແຕ່ການຕົກລົງໃຫ້ສິດທິບັດເອີຣົບ ຍັງມີຜົນບັງຄັບໃຊ້.

**8. ຜົນບັງຄັບໃຊ້ສົນທິສັນຍາ ວ່າດ້ວຍສິດທິບັດເອີຣົບ ຂອງອົງການສິດທິບັດເອີຣົບ**

ຜົນບັງຄັບໃຊ້ສົນທິສັນຍາ ວ່າດ້ວຍສິດທິບັດເອີຣົບ ຂອງອົງການສິດທິບັດເອີຣົບ ຈະບໍ່ມີຜົນບັງຄັບໃຊ້ໃນການຈັດຕັ້ງປະຕິບັດວຽກງານຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ, ເວັ້ນເສຍແຕ່ໄດ້ລະບຸບາງເນື້ອໃນຂອງສົນທິສັນຍາດັ່ງກ່າວໄວ້ໃນຄໍາແນະນໍາສະບັບນີ້.

## III. ຄ່າທຳນຽມການຮັບຮອງສິດທິບັດເອີຣົບ

### 1. ຄ່າທຳນຽມການຮັບຮອງສິດທິບັດເອີຣົບ

ຄ່າທຳນຽມການຮັບຮອງສິດທິບັດເອີຣົບ ໃຫ້ປະຕິບັດ ດັ່ງນີ້:

1) ຄ່າທຳນຽມ ກ່ຽວກັບການຂໍຮັບຮອງສິດທິບັດ ຂອງຄຳແນະນຳສະບັບນີ້ ຕ້ອງຊຳລະໃຫ້ສຳນັກງານສິດທິບັດເອີຣົບ ພາຍຫຼັງທີ່ໄດ້ພິມເຜີຍແຜ່ລົງໃນວາລະສານສິດທິບັດເອີຣົບ ກ່ຽວກັບການພິມເຜີຍແຜ່ຜົນການຊອກຄົ້ນຂອງເອີຣົບ ພາຍໃນ ຫົກ ເດືອນນັບຈາກວັນທີ ທີ່ໄດ້ພິມເຜີຍແຜ່ ຫຼື ໃຫ້ຢູ່ໃນຊ່ວງເວລາຂອງການດຳເນີນການກວດສອບພາຍໃນເອີຣົບ;

2) ຄ່າທຳນຽມການຂໍຮັບຮອງສິດທິບັດ ສາມາດສືບຕໍ່ຊຳລະ ພາຍໃນ ສອງ ເດືອນນັບແຕ່ວັນໝົດອາຍຸຂອງໄລຍະເວລາພິມເຜີຍແຜ່ຜົນການຊອກຄົ້ນຂອງເອີຣົບ ພາຍໃນ ຫົກ ເດືອນ, ແຕ່ຕ້ອງຈ່າຍຄ່າປັບໄໝເພີ່ມ ຫ້າສິບ ເປີເຊັນຂອງຄ່າທຳນຽມ;

3) ສຳລັບການຊຳລະຄ່າທຳນຽມຮັບຮອງສິດທິບັດ ໃຫ້ປະຕິບັດລະບຽບການ ກ່ຽວກັບຄ່າທຳນຽມຂອງສຳນັກງານສິດທິບັດເອີຣົບ, ຄ່າທຳນຽມການຮັບຮອງສິດທິບັດເອີຣົບ ເມື່ອຊຳລະແລ້ວ ຈະບໍ່ສາມາດຖອນຄືນ.

### 2. ຄ່າທຳນຽມສຳລັບຮັກສາອາຍຸການຂອງສິດທິບັດເອີຣົບ ທີ່ໄດ້ຖືກຮັບຮອງ

ຄ່າທຳນຽມ ສຳລັບຮັກສາອາຍຸການຂອງສິດທິບັດເອີຣົບ ທີ່ໄດ້ຖືກຮັບຮອງ ຕ້ອງໄດ້ຊຳລະໃຫ້ແກ່ກົມຊັບສິນທາງປັນຍາ ນັບຈາກປີທີ່ສິດທິບັດເອີຣົບໄດ້ຮັບການປົກປ້ອງ ແລະ ພາຍຫຼັງໄດ້ຮັບການພິມເຜີຍແຜ່.

ຄ່າທຳນຽມ ສຳລັບຮັກສາອາຍຸການຂອງສິດທິບັດເອີຣົບ ທີ່ໄດ້ຖືກຮັບຮອງແລ້ວ ບໍ່ທັນໄດ້ຮັບການຊຳລະ ພາຍໃນ ສອງ ເດືອນ ນັບຈາກວັນທີທີ່ໄດ້ພິມເຜີຍແຜ່ລົງໃນວາລະສານສິດທິບັດເອີຣົບ, ຄ່າທຳນຽມດັ່ງກ່າວ ຍັງສາມາດຊຳລະໄດ້ຕາມໄລຍະເວລາທີ່ກົມຊັບສິນທາງປັນຍາ ໄດ້ກຳນົດ.

### 3. ການຊຳລະຄ່າທຳນຽມ ຢູ່ ສປປ ລາວ

ການຊຳລະຄ່າທຳນຽມ ທີ່ກ່ຽວຂ້ອງກັບການຮັບຮອງສິດທິບັດເອີຣົບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ຂອງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## IV. ການຈັດຕັ້ງປະຕິບັດວຽກງານຮັບຮອງສິດທິບັດເອີຣົບ ຢູ່ ສປປ ລາວ

ກົມຊັບສິນທາງປັນຍາ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຄຳແນະນຳບັບນີ້ ໃຫ້ໄດ້ຮັບຜົນດີ.

## V. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຄຳແນະນຳສະບັບນີ້ ກວມເອົາທັງຄຳຮ້ອງຂໍຮັບ ແລະ ສິດທິບັດເອີຣົບ ທີ່ໄດ້ຍື່ນຄຳຮ້ອງ ແລະ ໄດ້ຮັບສິດທິບັດກ່ອນວັນທີ ທີ່ສັນຍາ ວ່າດ້ວຍການຮັບຮອງສິດທິບັດສິດທິບັດເອີຣົບ ລະຫວ່າງ ສປປ ລາວ ແລະ ອົງການສິດທິບັດເອີຣົບ ສະບັບລົງວັນທີ 13 ພຶດສະພາ 2024 ມີຜົນບັງຄັບໃຊ້.

**ລັດຖະມົນຕີ**

ລັດຖະມົນຕີ

ມະໄລທອງ ກົມມະສິດ